ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງ ໂຍທາທິການ ແລະ ຂົນສົ່ງ**
**ກົມທາງນ້ຳ**

**ເລກທີ:** 29935 **/ຍທຂ.ກທນ**
**ວັນທີ:** 21. 12. 2018

ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດທຳມະຊາດ ເຂດອາຊີຕາເວັນອອກສຽງໃຕ້
(Lao PDR-SEA DRM Project: P160930)
ອົງປະກອບທີ 1: ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ
Reference No. C1/G004

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: **ບໍລິສັດ , ຫ້າງຮ້ານຕ່າງໆ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນສົມທຽບລາຄາ**

1. ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກົມທາງນ້ຳ ໄດ້ຮັບອະນຸມັດທຶນກູ້ຢືມປະຈຳສົກປີ 2017 ຈາກ ທະນາຄານໂລກ ເພື່ອດຳເນີນການ ປະມູນຈັດຊື້ ອຸປະກອນດ້ານ ໄອທີ (IT Equipment), Ref.No. C1/G004, ເພື່ອສະໜອງແກ່ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ, ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ.
2. ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກົມທາງນ້ຳ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງສົມທຽບລາຄາ ສຳລັບການ ສະໜອງອຸປະກອນດ້ານ ໄອທີ ສຳລັບຫ້ອງການໂຄງການ ທີ່ ນະຄອນຫຼວງວຽງຈັນ ແລະ ແຂວງອຸດົມໄຊ, ໄລຍະເວລາ ໃນການສົ່ງມອບແມ່ນ 30 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນດຳລັດວ່າດ້ວຍການປະມູນຈັດຊື້ ສິນຄ້າ, ການກໍ່ສ້າງ ສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ເລກທີ 0861/ກງ, ລົງວັນທີ 05 ພຶດສະພາ 2009.
4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນ ເວລາ 14:00 (ບ່າຍ) ຂອງ (ວັນສຸກ) ວັນທີ 4 ມັງກອນ 2019 ທີ່ຫ້ອງປະຊຸມຂອງ ກົມທາງນ້ຳ (ຊັ້ນ 2), ກະຊວງ ໂຍທາທິການ ແລະ ຂົນສົ່ງ, ນະຄອນຫຼວງວຽງຈັນ.
**ໝາຍເຫດ:** ລາຍລະອຽດເອກະສານປະມູນສົມທຽບລາຄາ ແລະການປະກອບເອກະສານຕ່າງໆ ສາມາດດາວໂລດໄດ້ທີ່: http://www.mpwt.gov.la/en/projects-en/sea-drm

**ຫົວໜ້າກົມທາງນ້ຳ**

ຮຸ່ງຫຼ້າ ແສງເມືອງ

ຕິດຕໍ່ພົວພັນ: 021 452423, 020 29122279
Email: moukmany.not@gmail.com

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມທາງນໍ້າ

ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດທຳມະຊາດ ເຂດອາຊີຕາເວັນອອກສ່ຽງໃຕ້
(Lao PDR-SEA DRM Project: P160930)

ອົງປະກອບທີ 1: ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ

# ເອກະສານປະມູນສົມທຽບລາຄາ

## ການສະໜອງ ເຄື່ອງອຸປະກອນດ້ານ ໄອທີ

## (IT Equipment)

### ສຳລັບຫ້ອງການປະສານງານໂຄງການ (ນະຄອນຫຼວງວຽງຈັນ) ແລະ ຫ້ອງການຈັດຕັ້ງປະຕິບັດໂຄງການ (ອຸດົມໄຊ)

Reference No. C1/G004

Shopping Procedure

ທັນວາ 2018

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

**ກະຊວງ ໂຍທາທິການ ແລະ ຂົນສົ່ງ**
**ກົມທາງນ້ຳ**

**ເລກທີ:** 29935 **/ຍທຂ.ກທນ**
**ວັນທີ:** 21.12.2018

ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດທຳມະຊາດ ເຂດອາຊີຕາເວັນອອກສຽງໃຕ້
(Lao PDR-SEA DRM Project: P160930)
ອົງປະກອບທີ 1: ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ ແຂວງອຸດົມໄຊ
Reference No. C1/G004

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: **ບໍລິສັດ , ຫ້າງຮ້ານຕ່າງໆ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນສົມທຽບລາຄາ**

1. ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກົມທາງນ້ຳ ໄດ້ຮັບອະນຸມັດທຶນກູ້ຢືມປະຈຳສົກປີ 2017 ຈາກທະນາຄານໂລກ ເພື່ອດຳເນີນການ ປະມູນຈັດຊື້ ອຸປະກອນດ້ານ ໄອທີ (IT Equipment), Ref.No. C1/G004,ເພື່ອສະໜອງແກ່ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມ ເທດສະບານເມືອງໄຊ, ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ.
2. ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກົມທາງນ້ຳ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງສົມທຽບລາຄາ ສຳລັບການ ສະໜອງອຸປະກອນດ້ານ ໄອທີ ສຳລັບຫ້ອງການໂຄງການ ທີ່ ນະຄອນຫຼວງວຽງຈັນ ແລະ ແຂວງອຸດົມໄຊ, ໄລຍະເວລາ ໃນການສົ່ງມອບແມ່ນ 30 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນດຳລັດວ່າດ້ວຍການປະມູນຈັດຊື້ ສິນຄ້າ, ການກໍ່ສ້າງ ສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ເລກທີ 0861/ກງ, ລົງວັນທີ 05 ພຶດສະພາ 2009.
4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນ ເວລາ 14:00 (ບ່າຍ) ຂອງ (ວັນສຸກ) ວັນທີ 4 ມັງກອນ 2019 ທີ່ຫ້ອງປະຊຸມຂອງ ກົມທາງນ້ຳ (ຊັ້ນ 2), ກະຊວງ ໂຍທາທິການ ແລະ ຂົນສົ່ງ, ນະຄອນຫຼວງວຽງຈັນ.
   **ໝາຍເຫດ:** ລາຍລະອຽດເອກະສານປະມູນສົມທຽບລາຄາ ແລະການປະກອບເອກະສານຕ່າງໆ ສາມາດດາວໂລດໄດ້ທີ່: http://www.mpwt.gov.la/en/projects-en/sea-drm

**ຫົວໜ້າກົມທາງນ້ຳ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ ກົມທາງນ້ຳ

ຮຸ່ງຫຼ້າ ແສງເມືອງ

ຕິດຕໍ່ພົວພັນ: 021 452423, 020 29122279
Email: moukmany.not@gmail.com

# ໝວດທີ 1: ຄຳແນະນຳສຳລັບຜູ້ສະໜອງສິນຄ້າ

1. **ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກົມທາງນ້ຳ** ໄດ້ຮັບອະນຸມັດທຶນກູ້ຢືມ ປະຈຳສົກປີ 2017 ຈາກ ທະນາຄານໂລກ ເພື່ອດຳເນີນການປະມູນຈັດຊື້ ອຸປະກອນດ້ານ ໄອທີ (IT Equipment) Ref.No. C1/G004, ສະໜອງໃຫ້ແກ່ ຫ້ອງການປະສານງານ ແລະ ຫ້ອງການຈັດຕັ້ງປະຕິບັດ ໂຄງການ ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ. ຜູ້ສະໜອງສິນຄ້າທີ່ໄດ້ຮັບຮອງເອົາເປັນຜູ້ຊະນະການປະມູນຈະຕ້ອງໄດ້ສົ່ງມອບສິນຄ້າພາຍໃນ ກຳນົດເວລາຕາມທີ່ລະບຸໄວ້ຢູ່ໃນຂໍ້ທີ5 ຂອງ ເງື່ອນໄຂຂອສັນຍາ

2. **ຄວາມເໝາະສົມຂອງຜູ້ສະໜອງສິນຄ້າ:** ຜູ້ສະໜອງສິນຄ້າ ຕ້ອງໄດ້ສະໜອງຂໍ້ມູນທີ່ກຳນົດໄວ້ຢູ່ໃນ ໝວດທີ 2: ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ.

3. **ການກະທຳຜິດ ແລະ ການສໍ້ລາດບັງຫຼວງ:**
   - 3.1. ລັດຖະບານ ຮຽກຮ້ອງຕ້ອງການໃຫ້ຜູ້ຈັດຊື້ ພ້ອມກັບຜູ້ເຂົ້າແຂ່ງຂັນປະມູນ, ຕ້ອງມີຄຸນນະທຳສູງໃນເວລາຈັດຕັ້ງປະຕິບັດການປະມູນຈັດຊື້ ແລະຈັດຕັ້ງປະຕິບັດສັນຍາ ແລະປະຕິບັດໃຫ້ຖືກຕ້ອງຕາມເປົ້າໝາຍຂອງການນຳໃຊ້ທຶນຂອງລັດ.
   - 3.2. ໂດຍປະຕິບັດຕາມຄວາມຮຽກຮ້ອງຕ້ອງການດັ່ງກ່າວນີ້ ຜູ້ຈັດຊື້ ຕ້ອງໄດ້ປະຕິບັດ ດັ່ງນີ້:
     - ກ) ຕັດຜູ້ເຂົ້າແຂ່ງຂັນປະມູນນັ້ນ ອອກຈາກການແຂ່ງຂັນປະມູນດັ່ງກ່າວນີ້ ຫຼືບໍ່ຮັບຮອງເອົາ ເປັນຜູ້ຊະນະການປະມູນ; ແລະ
     - ຂ) ປະກາດແຈ້ງການວ່າເປັນຜູ້ເຂົ້າແຂ່ງຂັນປະມູນທີ່ບໍ່ມີຄວາມເໝາະສົມ, ພ້ອມທັງ ກຳນົດ ຫຼືລະບຸໄລຍະເວລາທີ່ຖືກຫ້າມບໍ່ໃຫ້ເຂົ້າຮ່ວມແຂ່ງຂັນປະມູນໃນການປະມູນຈັດຊື້ ຂອງ ລັດ; ຖ້າຫາກ ວ່າຜູ້ຈັດຊື້ ໄດ້ຕັດສິນໃນທຸກໆຄັ້ງວ່າ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ມີການກະທຳທີ່ພົວພັນກັບ ການສໍ້ລາດບັງຫຼວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫຼືການບີບບັງຄັບ ຢູ່ໃນການແຂ່ງຂັນປະມູນ ຫຼື ມີການກະທຳເພື່ອໃຫ້ຕົນເອງໄດ້ຮັບສັນຍາຈາກການ ປະມູນດ້ວຍທຶນຂອງລັດ.
   - 3.3. ການກະທຳທີ່ພົວພັນການສໍ້ລາດບັງຫຼວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫຼື ການບີບບັງຄັບ ໃນທຸກໆຮູບແບບທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ທີ 3.4 ໂດຍທີ່ຜູ້ຈັດຊື້ ສາມາດຮູ້ເຫັນໄດ້ນັ້ນ. ຜູ້ຈັດຊື້ ຕ້ອງໄດ້ດຳເນີນການແຕ່ຫົວທີໂລດກັບຜູ້ເຂົ້າແຂ່ງຂັນປະມູນນັ້ນ, ດ້ວຍການເຊີນເອົາຜູ້ເຂົ້າແຂ່ງຂັນປະມູນນັ້ນ ເຂົ້າມາອະທິບາຍ ແລະຊີ້ແຈງຕໍ່. ຜູ້ຈັດຊື້ ຈະຮັບຮອງເອົາສະເພາະ ແຕ່ການອະທິບາຍ ທີ່ມີເຫດຜົນພຽງພໍເທົ່ານັ້ນ, ຖ້າຫາກວ່າ ຄຳອະທິບາຍດັ່ງກ່າວນີ້ ບໍ່ເປັນໜ້າເຊື່ອຖືໄດ້ນັ້ນ, ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຕ້ອງຖືກຕັດອອກຈາກການປະມູນ ແລະເຫດຜົນດັ່ງກ່າວນີ້ ຕ້ອງໄດ້ບັນທຶກໄວ້ຢູ່ໃນບົດລາຍງານກ່ຽວກັບການດຳເນີນການປະມູນ ແລະອອກແຈ້ງການໃນທັນທີທັນໃດ ເພື່ອແຈ້ງໃຫ້ຜູ້ເຂົ້າແຂ່ງຂັນປະມູນທີ່ກ່ຽວຂ້ອງຮູ້ນຳ. ທຸກໆການຕິດຕໍ່ພົວພັນລະຫວ່າງຜູ້ຈັດຊື້ ແລະຜູ້ເຂົ້າແຂ່ງຂັນປະມູນທີ່ພົວພັນ ເຖິງມາດຕະການ ໃນການຢືນຢັນຄວາມຜິດ ຫລື ການສໍ້ລາດບັງຫລວງຕ້ອງໄດ້ຂຽນເປັນລາຍລັກອັກສອນ.

3.4. ລັດຖະບານ ໄດ້ກຳນົດຄວາມໝາຍຂອງຄຳສັບເຫຼົ່ານີ້ ເພື່ອເປັນຂໍ້ກຳນົດ ດັ່ງນີ້:

ກ) "ພຶຕິກຳສໍ້ລາດບັງຫຼວງ" ໝາຍເຖິງ ການສະເໜີ, ເອົາໃຫ້ ຫຼື ຮັບປາກວ່າຈະໃຫ້ ໂດຍທາງກົງ ຫຼືທາງອ້ອມ ຕໍ່ພະນັກງານທັງຫມົດ ຫຼືເຈົ້າຂອງໂຄງການ ທີ່ເປັນຜູ້ຈັດຊື້ ຫຼືຜູ້ທີ່ມີສິດຕັດສິນໃນເບື້ອງລັດ ຫຼືເອກະຊົນ ຫຼືນິຕິບຸກຄົນດ້ວຍທຸກໆຮູບແບບ ເຊັ່ນ: ຂອງຂວັນ, ການວ່າຈ້າງ ຫຼືດ້ວຍວິທີອື່ນໆ ຫຼືຄ່າບໍລິການ ເພື່ອເປັນການຊັກຊວນໃຫ້ກະທຳ ຫຼືຕັດສິນ ຫຼືດ້ວຍວິທີການຕິດຕາມນຳຜູ້ຈັດຊື້ ໃນສິ່ງທີ່ພົວພັນກັບການດຳເນີນການປະມູນ.

ຂ) "ພຶຕິກຳສໍ້ໂກງ" ໝາຍເຖິງ ການສະເໜີຂໍ້ມູນທີ່ບິດເບືອນ (ບໍ່ຖືກຕ້ອງ) ແລະບໍ່ມີມູນຄວາມຈິງ, ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ຜູ້ຈັດຊື້.

ຄ) "ພຶຕິກຳສົມຮູ້ຮ່ວມຄິດ" ໝາຍເຖິງ ການມີແຜນ ແລະມີການກະກຽມໄວ້ແລ້ວລະຫວ່າງ ຜູ້ເຂົ້າແຂ່ງຂັນປະມູນດ້ວຍກັນ ແຕ່ສອງ ຫຼືຫຼາຍຄົນຂຶ້ນໄປ, ໂດຍທີ່ຜູ້ຈັດຊື້ບໍ່ໄດ້ຮູ້ຈັກ (ກ່ອນ ຫຼືພາຍຫຼັງ ການຍື່ນຊອງປະມູນແລ້ວ) ເພື່ອສ້າງລາຄາປະມູນປອມ, ທີ່ບໍ່ມີລັກສະນະແຂ່ງຂັນ ແລະການຂັດແຍ່ງທາງດ້ານຜົນປະໂຫຍດ (ການມີຜົນປະໂຫຍດຊໍ້າຊ້ອນ) ຕໍ່ກັບເຈົ້າຂອງໂຄງການໃນທາງດ້ານຄວາມເປັນອິດສະຫຼະ, ຄວາມໂປ່ງໃສ ແລະ ການແຂ່ງຂັນທີ່ແທ້ຈິງ.

ງ) "ພຶຕິກຳບີບບັງຄັບ" ໝາຍເຖິງ ການສ້າງຄວາມເສຍຫາຍ ແລະການຂົ່ມຂູ່ ເພື່ອໃຫ້ສ້າງຄວາມເສຍຫາຍໃນທາງກົງ ຫຼືທາງອ້ອມໂດຍບຸກຄົນ ຫຼືດ້ວຍສິດອຳນາດຂອງເຂົາເພື່ອຂົ່ມຂູ່ໃນການດຳເນີນການປະມູນ ຫຼືມີຜົນກະທົບຕໍ່ການຈັດຕັ້ງປະຕິບັດສັນຍາ.

ຈ) "ພຶຕິກຳກີດກັ້ນ" ໝາຍເຖິງ

(1) ມີເຈດຕະນາເພື່ອທຳລາຍ, ປອມແປງ, ດັດແປງ ຫຼືປິດບັງຫລັກຖານທາງດ້ານວັດຖຸສຳລັບການສອບສວນ ຫຼືປອມແປງຂໍ້ຄວາມຕໍ່ກັບການສອບສວນ ເພື່ອເປັນການກີດໜ່ວງໃນການສອບສວນຂອງຜູ້ຈັດຊື້ ເພື່ອຢືນຢັນເຖິງພຶດຕິກຳທີ່ພົວພັນກັບ ການສໍ້ລາດບັງຫຼວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ແລະການບີບບັງຄັບ ແລະ/ຫຼື ການຂົ່ມຂູ່, ກໍ່ກວນ ຫຼືນາບຂູ່ຕໍ່ທຸກໆຝ່າຍເພື່ອໃຫ້ປິດບັງບໍ່ໃຫ້ເປີດເຜີຍຂໍ້ມູນທີ່ພົວພັນກັບການສອບສວນ ຫຼືຈຸດປະສົງຂອງການສອບສວນ; ຫຼື

(2) ຜູ້ຈັດຊື້ ມີສິດໃນການດຳເນີນການກວດກາ ແລະກວດສອບບັນຊີ ຂອງຜູ້ເຂົ້າແຂ່ງຂັນປະມູນໄດ້.

3.5. ລັດຖະບານ ຮຽກຮ້ອງໃຫ້ຜູ້ຈັດຊື້ ຫລືບຸກຄົນທີ່ມີໜ້າທີ່ຮັບຜິດຊອບໃນການປະມູນຈັດຊື້ ບໍ່ຄວນຊັກຊວນ, ຮຽກຮ້ອງ ແລະ/ຫລື ມີການບີບບັງຄັບ ເພື່ອຜົນປະໂຫຍດສ່ວນຕົວທີ່ພົວພັນກັບຂະບວນການ ທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງນີ້.

4. **ເອກະສານສະເໜີສົມທຽບລາຄາ:** ເອກະສານສະເໜີສົມທຽບລາຄາປະກອບມີເອກະສານ ດັ່ງນີ້:

ຫນັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ໝວດທີ 1: ຄຳແນະນຳສຳລັບຜູ້ສະໜອງສິນຄ້າ.

ໝວດທີ 2: ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ.

ໝວດທີ 3: ເງື່ອນໄຂຂອງສັນຍາ.

ໝວດທີ 4: ແບບຟອມຍື່ນສົມທຽບລາຄາ.

ໝວດທີ 5: ຕາຕະລາງລາຍການສິນຄ້າ ແລະການສະເໜີລາຄາ.

ໝວດທີ 6: ມາດຕະຖານເຕັກນິກ.

ໝວດທີ 7: ຕາຕະລາງລາຍການສິນຄ້າ ແລະການສົ່ງມອບສິນຄ້າ.

ໝວດທີ 8: ຮູບຕົວຢ່າງສິນຄ້າ.

ໝວດທີ 9: ສັນຍາ.

5. **ເອກະສານທີ່ປະກອບໃນການຍື່ນສະເໜີລາຄາ:**

ຜູ້ສະໜອງສິນຄ້າຕ້ອງປະກອບເອກະສານ ສະເໜີລາຄາ ໂດຍມີເອກະສານ ດັ່ງນີ້:

(ກ). ແບບຟອມຍື່ນສົມທຽບລາຄາ;

(ຂ). ຕາຕະລາງລາຍການສິນຄ້າ ແລະການສະເໜີລາຄາ;

(ຄ). ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະໜອງໃຫ້;

(ງ). ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ;

(ຈ). ຕາຕະລາງລາຍການສິນຄ້າ ແລະການສົ່ງມອບສິນຄ້າ;

(ສ). ຂໍ້ມູນ ແລະກາຕາລອກ ຂອງສິນຄ້າທີ່ກ່ຽວຂ້ອງກັບລາຍການສິນຄ້າ.

6. **ມາດຕະຖານໃນການສົມທຽບ ແລະການປະເມີນ:** ຜູ້ສະໜອງສິນຄ້າ ຕ້ອງສະເໜີສະໜອງສິນ ຄ້າໃຫ້ຄົບຖ້ວນທຸກໆລາຍການທີ່ຕ້ອງການ ຕາມທີ່ລະບຸໄວ້ຢູ່ໃນໝວດທີ 5: ຕາຕະລາງລາຍການສິນຄ້າ ແລະການສະເໜີລາຄາ. ຜູ້ຈັດຊື້ ມີສິດໃນການປະຕິເສດການສະເໜີລາຄາໄດ້ດັ່ງນີ້: 1. ເອກະສານທີ່ປະກອບມາບໍ່ຄົບຖ້ວນສົມບູນ ຫຼື 2. ມາດຕະຖານເຕັກນິກທີ່ສະເໜີມາບໍ່ຖືກຕ້ອງ ກັບມາດຕະຖານເຕັກນິກທີ່ຕ້ອງການ. ການຮັບຮອງເອົາເປັນຜູ້ຊະນະການປະມູນ ຕ້ອງແມ່ນຜູ້ທີ່ສະເໜີລາຄາ ທີ່ໄດ້ປະເມີນ ວ່າແມ່ນລາຄາຕ່ຳ.

7. **ການສົມທຽບລາຄາມີຜົນໃຊ້ໄດ້:** ລາຄາທີ່ສະເໜີມາຕ້ອງມີຜົນໃຊ້ໄດ້ **20 ວັນ**, ເລີ້ມ ແຕ່ວັນຕໍ່ມາຂອງວັນທີ່ກຳນົດເປັນວັນປິດຮັບຊອງສະເໜີລາຄາ ຕາມທີ່ລະບຸໄວ້ຢູ່ໃນ ຂໍ້ທີ13 ຂອງຄຳແນະນຳສຳລັບຜູ້ສະໜອງສິນຄ້າ ຫຼື ຮອດວັນທີ **24 ມັງກອນ 2019**.

8. ການຍື່ນຊອງປະມູນ: ຜູ້ເຂົ້າແຂ່ງຂັນປະມູນໜຶ່ງສາມາດຍື່ນຊອງປະມູນໄດ້ພຽງແຕ່ຊອງດຽວເທົ່ານັ້ນ.

9. ສະກຸນເງິນໃນການສົມທຽບ: ລາຄາລວມທັງໝົດ ຈະສົມທຽບເປັນເງິນ **USD(ໂດລາສະຫະລັດ)**

10. **ລາຄາ:** ລາຄາທີ່ສະເໜີຕ້ອງລວມເອົາ (ອາກອນ, ພາສີ, ການຂົນສົ່ງ, ການປະກັນໄພ ແລະລາຍຈ່າຍອື່ນໆທີ່ອາດຈະເກີດຂຶ້ນ ໃນການສົ່ງມອບສິນຄ້າຮອດສະຖານທີ່ສົ່ງມອບ). ລາຄາທີ່ສະເໜີນີ້ຕ້ອງບໍ່ມີການປ່ຽນແປງໃດໆ ໃນຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດສັນຍາສະບັບນີ້.

11. **ການຮັບປະກັນ:** ສິນຄ້າທີ່ສະໜອງໃຫ້ນີ້ ຕ້ອງຮັບປະກັນ **ຢ່າງໜ້ອຍ 1 ເດືອນ**.

12. **ການບໍລິການຫຼັງການຂາຍ:** ຜູ້ສະຫນອງສິນຄ້າ ຕ້ອງສະເໜີຕາຕະລາງລາຄາ (ການບໍາລຸງຮັກສາ ແລະເຄື່ອງອາໄຫຼ່) ທີ່ຈໍາເປັນໃນການບໍາລຸງຮັກສາ ແລະສ້ອມແປງ ເພື່ອໃຫ້ອຸປະກອນ ດັ່ງກ່າວນີ້ ສາມາດນໍາໃຊ້ໄດ້ເປັນປົກກະຕິພາຍໃນໄລຍະ 1 ປີ ຂຶ້ນໄປ.

13. ການປະກອບເອກະສານ ແລະການຕິດຊອງການສະເໜີລາຄາ: ຜູ້ສະໜອງສິນຄ້າ ຕ້ອງປະກອບ ເອກະສານສະເໜີລາຄາ ສະບັບຕົ້ນ ຈໍານວນ ຫນຶ່ງ (1) ສະບັບ ແລະສະບັບສໍາເນົາ ຈໍານວນ ສອງ (2) ສະບັບ ພ້ອມທັງຂຽນຫມາຍໃສ່ວ່າ "ສະບັບຕົ້ນ" ແລະ "ສະບັບສໍາເນົາ" ໃນກໍລະນີ ເອກະສານທີ່ປະກອບມານັ້ນ ຫາກມີເອກະສານບໍ່ຄົບຖ້ວນ ລະຫວ່າງສະບັບຕົ້ນ ແລະສະບັບສໍາເນົາ ນັ້ນ ແມ່ນໃຫ້ຖືເອົາສະບັບຕົ້ນເປັນຫລັກ. ເອກະສານສະບັບຕົ້ນ ແລະສະບັບສໍາເນົາ ແຕ່ລະສະບັບ ຕ້ອງຂຽນ ຫຼືພິມດ້ວຍນໍ້າເມິກທີ່ລຶບບໍ່ອອກງ່າຍ ແລະຕ້ອງເຊັນໂດຍຜູ້ທີ່ ມີສິດອໍານາດເຕັມ ທີ່ ສາມາດເຊັນໃນນາມຜູ້ສະໜອງສິນຄ້າ, ຊື່ ແລະນາມສະກຸນ, ຕໍາແຫນ່ງຂອງ ຜູ້ທີ່ໄດ້ຮັບການ ມອບ ຫມາຍຕ້ອງພິມໃສ່ຢູ່ກ້ອງລາຍເຊັນ. ທຸກໆຫວ່າງຂອງແຖວ, ການລຶບ ຫຼືການຂຽນຍອງໃສ່ຂ້າງເທິງ ຈະມີຜົນໃຊ້ໄດ້ນັ້ນ ກໍຕໍ່ເມື່ອວ່າໄດ້ມີການເຊັນຫຍໍ້ກໍາກັບ ໂດຍຜູ້ທີ່ເຊັນເອກະສານປະມູນ. ຜູ້ສະໜອງ ສິນຄ້າໜຶ່ງ ສາມາດຍື່ນຊອງສົມທຽບລາຄາໄດ້ພຽງແຕ່ໜຶ່ງ (1) ຊອງ ເທົ່ານັ້ນ.

14. **ສະຖານທີ່ ແລະມື້ສຸດທ້າຍໃນການຍື່ນຊອງສົມທຽບລາຄາ:** ຊອງສົມທຽບລາຄາ ຕ້ອງຍື່ນຊ້າສຸດ ບໍ່ ໃຫ້ເກີນເວລາ **14:00 (ຕອນບ່າຍ) ຂອງວັນທີ 4 ມັງກອນ 2019** ທີ່ **ຫ້ອງປະຊຸມ ກົມທາງນໍ້າ (ຊັ້ນ 2), ກະຊວງ ໂຍທາທິການ ແລະຂົນສົ່ງ** ຊອງສົມທຽບລາຄາໃດ ທີ່ໄດ້ຮັບພາຍຫຼັງ ເວລາທີ່ ກໍານົດເປັນເວລາປິດຮັບຊອງນັ້ນ ຈະຖືວ່າເປັນການສົ່ງຊອງຊ້າ ແລະຊອງສົມທຽບລາຄານັ້ນ ຈະຖືກ ປະຕິເສດ ແລະສົ່ງຄືນໃຫ້ເຈົ້າຂອງໂດຍບໍ່ໄດ້ມີການເປີດຊອງ.

15. **ການປ່ຽນແປງ ຫຼື ການຖອນຊອງສົມທຽບລາຄາ:** ພາຍຫຼັງທີ່ໄດ້ຍື່ນຊອງແລ້ວນັ້ນ, ກ່ອນຮອດເວລາ ປິດຮັບຊອງສົມທຽບລາຄາ, ຜູ້ສະໜອງສິນຄ້າ ອາດສາມາດຖອນຊອງສົມທຽບລາຄາ ຂອງຕົນໄດ້ ໂດຍຕ້ອງໄດ້ສະເໜີເປັນລາຍລັກອັກສອນຫາຜູ້ຈັດຊື້. ພາຍຫຼັງເວລາປິດຮັບຊອງສົມທຽບ ລາຄາທີ່ ໄດ້ກໍານົດໄວ້ຢູ່ໃນຂໍ້ທີ 14 ຂ້າງເທິງ ຜູ້ຈັດຊື້ ຈະບໍ່ອະນຸຍາດໃຫ້ມີການຖອນຊອງສົມທຽບລາຄາໄດ້. ການຖອນຊອງສົມທຽບລາຄາ ພາຍຫຼັງເວລາປິດຮັບຊອງແລ້ວນັ້ນ ແລະໃນໄລຍະເວລາທີ່ອາຍຸການ ສົມທຽບລາຄາ ຍັງມີຜົນໃຊ້ໄດ້ຢູ່ນັ້ນ, ຜູ້ຈັດຊື້ ຈະຖືວ່າ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ເປັນຜູ້ທີ່ບໍ່ມີຄວາມ ເໝາະສົມ ແລະ ຈະບໍ່ສາມາດເຂົ້າ ແຂ່ງຂັນປະມູນໃນຕໍ່ໜ້າອີກ.

16. **ການເປີດຊອງສົມທຽບລາຄາ:** ຊອງສົມທຽບລາຄາຈະເປີດໃນວັນທີ **4 ມັງກອນ 2019** (ວັນ ແລະ ເວລາດຽວກັນກັບມື້ປິດຮັບຊອງຕາມໜັງສືເຊີນເຂົ້າຮ່ວມການສົມທຽບລາຄາ) **ທີ່ ຫ້ອງປະຊຸມ ກົມທາງນໍ້າ (ຊັ້ນ 2) ກະຊວງ ໂຍທາທິການ ແລະຂົນສົ່ງ,** ເອກະສານສົມທຽບລາຄາ ຕ້ອງໄດ້ເປີດໃນ ເວລາຕໍ່ມານັ້ນໂລດ, ພາຍຫຼັງເວລາທີ່ໄດ້ປິດຮັບຊອງສົມທຽບລາຄາ ແລ້ວໂດຍຊ້ອງໜ້າຄະນະ ກໍາມະການປະມູນ ແລະຜູ້ຕາງໜ້າຂອງຜູ້ທີ່ຍື່ນຊອງສົມທຽບລາຄາທີ່ ສົນໃຈຢາກເຂົ້າຮ່ວມ. ການ ປະກາດໃນເວລາເປີດຊອງສົມທຽບລາຄາ ແມ່ນໃຫ້ອ່ານຊື່ຂອງ ຜູ້ສະໜອງສິນຄ້າ, ມີການຖອນ ຫຼື ປ່ຽນແປງ, ຖານະດ້ານກົດຫມາຍ (ໜັງສືອະນຸຍາດດໍາເນີນທຸລະກິດ ແລະ ທະບຽນອາກອນ), ລາຄາປະມູນ, ການຫຼຸດລາຄາ. ຜູ້ຈັດຊື້ ຕ້ອງໄດ້ແຈກຢາຍບົດບັນທຶກການເປີດຊອງສົມທຽບລາຄາ

ໃຫ້ແກ່ຜູ້ເຂົ້າຮ່ວມທຸກໆຄົນ. ໃນເວລາເປີດຊອງສົມທຽບລາຄາ ຫ້າມບໍ່ໃຫ້ມີການປະຕິເສດຊອງສົມທຽບລາຄາ, ເວັ້ນເສຍແຕ່ຊອງສົມທຽບລາຄາໃດ ທີ່ສົ່ງຊ້າເທົ່ານັ້ນ.

17. **ການຮັກສາເປັນຄວາມລັບ:** ພາຍຫຼັງທີ່ໄດ້ເປີດຊອງສົມທຽບລາຄາແລ້ວ, ທຸກໆຂໍ້ມູນ ທີ່ພົວພັນກັບການພິຈາລະນາ, ການຂໍຄວາມກະຈ່າງແຈ້ງ ແລະການປະເມີນການສົມທຽບລາຄາ ແລະການສະເໜີຮັບຮອງເອົາເປັນຜູ້ຊະນະການປະມູນ ແມ່ນບໍ່ສາມາດເປີດເຜີຍໃຫ້ຜູ້ສະໜອງສິນຄ້າ ຫຼືບຸກຄົນອື່ນໆທີ່ບໍ່ມີສ່ວນກ່ຽວຂ້ອງທາງການຮູ້ໄດ້ໃນເວລາປະເມີນການປະມູນຈົນກວ່າຈະໄດ້ປະກາດຮັບຮອງເອົາຜູ້ຊະນະການປະມູນ.

18. **ການປະເມີນ ແລະການສົມທຽບຊອງສົມທຽບລາຄາ:** ຜູ້ຈັດຊື້ ຈະຮັບຮອງເອົາເປັນຜູ້ຊະນະການ ສົມທຽບລາຄານັ້ນຕ້ອງແມ່ນຜູ້ທີ່ສະເໜີລາຄາທີ່ມີຄວາມເໝາະສົມ ແລະຄົບຖ້ວນຕາມເອກະສານ ສົມທຽບລາຄາ ແລະເປັນຜູ້ທີ່ສະເໜີລາຄາ ທີ່ໄດ້ປະເມີນວ່າແມ່ນ ລາຄາຕໍ່າ. ການປະເມີນການສົມທຽບລາຄາ, ຜູ້ຈັດຊື້ຈະໃຈ້ແຍກແຕ່ລະຊອງສົມທຽບລາຄາໂດຍການເພີ້ມຕື່ມໃສ່ໃນການກວດ ແກ້ການຄິດໄລ່ຜິດພາດ ດັ່ງນີ້:

(ກ). ຖ້າຫາກວ່າມີການຄາດເຄື່ອນກັນລະຫວ່າງມູນຄ່າທີ່ຂຽນເປັນຕົວເລກ ແລະການຂຽນເປັນ ຕົວໜັງສື, ແມ່ນໃຫ້ຖືເອົາມູນຄ່າທີ່ຂຽນເປັນຕົວໜັງສື;

(ຂ). ຖ້າຫາກວ່າ ມີການຄາດເຄື່ອນກັນລະຫວ່າງລາຄາຫົວໜ່ວຍ ແລະລາຄາລວມທີ່ແມ່ນຜົນຂອງການຄູນຈາກລາຄາຫົວໜ່ວຍກັບຈຳນວນແມ່ນໃຫ້ຖືເອົາລາຄາຫົວໜ່ວຍເປັນຫລັກ.

19. **ສິດຂອງຜູ້ຈັດຊື້:** ໂດຍຂື້ນກັບຄວາມຕ້ອງການສຸດທ້າຍ, ຜູ້ຈັດຊື້ ອາດສາມາດຊື້ເພີ້ມ ຫຼື ຫຼຸດຈຳນວນລົງໄດ້ສິບຫ້າ (15)% ຂອງຈຳນວນສິນຄ້າ ແລະຈະລະບຸຢູ່ໃນໃບສັ່ງຊື້. ກ່ອນການຕົກລົງຮັບຮອງເອົາເປັນຜູ້ຊະນະການສົມທຽບລາຄາ, ຜູ້ຈັດຊື້ສະຫງວນສິດໃນການຮັບຮອງເອົາ ຫລືປະຕິເສດ ຕໍ່ທຸກຊອງສົມທຽບລາຄາໄດ້ ແລະລົບລ້າງຂັ້ນຕອນການແຂ່ງຂັນໄດ້ທຸກໆເວລາ, ໂດຍຈະບໍ່ໄດ້ຮັບຜິດຊອບໃດໆຕໍ່ສິ່ງທີ່ມີຜົນກະທົບຕໍ່ຜູ້ສະໜອງສິນຄ້າ ຫຼືບໍ່ຈຳເປັນຕ້ອງອະທິບາຍເຫດຜົນໃດໆໃຫ້ ຜູ້ສະໜອງສິນຄ້າ.

20. **ການປະກາດຮັບຮອງເອົາເປັນຜູ້ຊະນະການປະມູນ:** ກ່ອນໄລຍະເວລາເອກະສານສົມທຽບລາຄາ ມີຜົນໃຊ້ໄດ້ຈະໝົດອາຍຸ, ຜູ້ຈັດຊື້ ຈະແຈ້ງຫາຜູ້ສະໜອງສິນຄ້າທີ່ ແມ່ນຜູ້ທີ່ສະເໜີລາຄາ ທີ່ມີຄວາມເໝາະສົມ ແລະຄົບຖ້ວນຕາມເອກະສານ ສົມທຽບລາຄາ ແລະເປັນຜູ້ທີ່ສະເໜີລາຄາ ທີ່ໄດ້ປະເມີນວ່າແມ່ນ ລາຄາຕໍ່າ. ຜູ້ສະໜອງສິນຄ້າ ທີ່ໄດ້ຮັບຮອງ ເອົາເປັນຜູ້ຊະນະການປະມູນ ຕ້ອງໄດ້ເຊັນສັນຍາພາຍໃນກຳນົດ ສິບຫ້າ (15) ວັນ.

21. **ການແຈ້ງການຫາຜູ້ເຂົ້າແຂ່ງຂັນປະມູນ ທີ່ບໍ່ໄດ້ຮັບຮອງເອົາເປັນຜູ້ຊະນະການປະມູນ:** ພາຍຫຼັງ ເຊັນສັນຍາແລ້ວ, ຜູ້ຈັດຊື້ ຕ້ອງອອກແຈ້ງການຫາຜູ້ເຂົ້າແຂ່ງຂັນປະມູນ ທີ່ບໍ່ໄດ້ຮັບຮອງເອົາເປັນ ຜູ້ຊະນະການປະມູນທຸກໆຄົນ. ຜູ້ເຂົ້າແຂ່ງຂັນປະມູນມີສິດສະເໜີ ຂໍລາຍລະອຽດກ່ຽວກັບຕົນເອງ ບໍ່ໄດ້ຮັບໄຊຊະນະໄດ້ ແລະຜູ້ຈັດຊື້ຕ້ອງໄດ້ຕອບ ແລະອະທິບາຍໃຫ້ເຂົາເຈົ້າ.

22. **ສັນຍາທີ່ໄດ້ເຊັນແລ້ວ**ນັ້ນ ຕ້ອງໄດ້ຈົດທະບຽນສັນຍາ, ຊຶ່ງແມ່ນຄວາມຮັບຜິດຊອບຂອງຜູ້ສະໜອງ ສິນຄ້າ ເພື່ອໃຫ້ສອດຄ່ອງກັບດຳລັດວ່າດ້ວຍການຈົດທະບຽນເອກະສານ, ສະບັບເລກທີ 52/ນຍ, ລົງວັນທີ 13 ມີນາ 1993.

23. **ຜູ້ຈັດຊື້ ຕ້ອງໄດ້ອອກເຜີຍແຜ່ຂໍ້ມູນກ່ຽວກັບການປະກາດຮັບຮອງເອົາການປະມູນ** ຢູ່ໃນເວບໄຊ ແລະ ບ່ອນສະຖານທີ່ ທີ່ສາທາລະນະສາມາດເຫັນຂໍ້ມູນໄດ້, ຢູ່ທາງນອກຂອງຫ້ອງການຂອງເຈົ້າຂອງ ໂຄງການ ທີ່ລະບຸເຖິງ (ກ) ຊື່ຂອງບໍລິສັດ ທີ່ໄດ້ຍື່ນຊອງປະມູນ; (ຂ) ລາຄາທີ່ອ່ານອອກໃນເວລາ ເປີດຊອງປະມູນ; (ຄ) ລາຍຊື່ ແລະລາຄາຂອງແຕ່ລະບໍລິສັດ ທີ່ຜ່ານການປະເມີນ; (ງ) ລາຍຊື່ຂອງ ບໍລິສັດ ທີ່ຖືກປະຕິເສດ ແລະ ເຫດຜົນໃນການປະຕິເສດ; (ຈ) ຊື່ຂອງບໍລິສັດ ທີ່ໄດ້ຮັບຮອງເອົາ ເປັນຜູ້ຊະນະການປະມູນ, ມູນຄ່າສັນຍາ, ພ້ອມທັງອະທິບາຍ, ຖ້າຫາກວ່າລາຄາມີຄວາມແຕກຕ່າງ ກັບລາຄາທີ່ສະເໜີມາ, ລວມທັງໄລຍະເວລາ ແລະສັງລວມກ່ຽວກັບຜົນຂອງການຮັບຮອງເອົາເປັນຜູ້ ຊະນະການປະມູນ.

24. **ການຕໍ່ວ່າ:** ຜູ້ສະໜອງສິນຄ້າທຸກໆຄົນ ມີສິດໃນການຕໍ່ວ່າ, ຖ້າຫາກວ່າຕົນເອງມີຜົນກະທົບ ຫຼື ມີ ຄວາມເຊື່ອມເສຍ ຫຼືເສຍຫາຍ ຈາກຜູ້ຈັດຊື້ ໃນການກະທຳທີ່ເປັນການເອົາປຽບຕາມທີ່ລະບຸໄວ້ຢູ່ ໃນ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ເລກທີ 0861/ກງ, ລົງວັນທີ 05 ພຶດສະພາ 2009. ການຕໍ່ວ່າແມ່ນຍື່ນຫາ (ຫ້ອງການຂອງຜູ້ຈັດຊື້) ແລະສົ່ງສຳເນົາໃຫ້ຫ້ອງການຄຸ້ມຄອງຕິດຕາມລະບຽບການປະມູນຈັດຊື້, ກະຊວງການເງິນ.

25. ຖ້າຫາກວ່າ ແຫຼ່ງທຶນ ທີ່ໄດ້ຮັບການຊ່ວຍເຫລືອລ້າ ຫລືກູ້ຢືມຈາກ ທະນາຄານໂລກ, ສະຖາບັນການ ເງິນ ຫລື ອົງການທີ່ກ່ຽວຂ້ອງ, ຜູ້ເຂົ້າແຂ່ງຂັນປະມູນ ຕ້ອງໄດ້ສົ່ງສຳເນົາ ການຕໍ່ວ່າດັ່ງກ່າວນີ້ ຫາ ທະນາຄານໂລກ ສະຖາບັນການເງິນ ຫລື ອົງການທີ່ກ່ຽວຂ້ອງ.

# ໝວດທີ 2: ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ

**ຜູ້ສະໜອງສິນຄ້າຕ້ອງປະກອບບັນດາເອກະສານດັ່ງລຸ່ມນີ້:**

1. ຊື່ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ສະໜອງສິນຄ້າ, ທີ່ຢູ່ທາງການ,
2. ສຳເນົາໜັງສືອະນຸຍາດດຳເນີນ ທຸລະກິດ,
3. ໜັງສືຢັ້ງຢືນການຊຳລະອາກອນ, ແລະ
4. ໜັງສືມອບສິດໃນການເຊັນ ເອກະສານປະມູນສະບັບຕົ້ນ (ໃນກໍລະນີ ຜູ້ທີ່ເຊັນເອກະສານປະມູນ ບໍ່ແມ່ນຜູ້ທີ່ມີສິດອຳນາດເຕັມຂອງບໍລິສັດ ເປັນຜູ້ເຊັນເອກະສານປະມູນ, ໜັງສືມອບສິດ ຕ້ອງໄດ້ປະກອບມາພ້ອມ).

# ໝວດທີ 3: ເງື່ອນໄຂຂອງສັນຍາ

1. **ບັນດາເອກະສານທີ່ປະກອບເປັນສັນຍາ ໄດ້ຈັດລຽງຕາມລະດັບຄວາມສໍາຄັນດັ່ງນີ້:**
   - (ກ) ສັນຍາ ທີ່ໄດ້ເຊັນກັນລະຫວ່າງສອງຝ່າຍ.
   - (ຂ) ເງື່ອນໄຂຂອງສັນຍາ.
   - (ຄ) ຕາຕະລາງລາຍການສິນຄ້າ ແລະລາຄາ.
   - (ງ) ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະໜອງໃຫ້.
   - (ຈ) ຕາຕະລາງການສົ່ງມອບສິນຄ້າ.

2. **ສັນຍາສະບັບນີ້** ສາມາດດັດແກ້ໄດ້ສະເພາະແຕ່ໄດ້ມີການຕົກລົງເຫັນດີ ທີ່ເປັນລາຍລັກອັກສອນ ລະຫວ່າງ ຜູ້ຈັດຊື້ ແລະຜູ້ສະໜອງສິນຄ້າ.

3. **ການສໍ້ໂກງ ແລະ ການສໍ້ລາດບັງຫລວງ:**

   3.1. ລັດຖະບານຮຽກຮ້ອງໃຫ້ຜູ້ຈັດຊື້, ຜູ້ເຂົ້າແຂ່ງຂັນປະມູນ ຫຼືຜູ້ສະໜອງສິນຄ້າ, ຕ້ອງປະຕິບັດ ຕາມລະບຽບກົດໝາຍ ຢ່າງເຂັ້ມງວດໃນການຈັດຕັ້ງປະຕິບັດການປະມູນຈັດຊື້ ແລະ ຈັດຕັ້ງປະຕິບັດ ສັນຍາໃຫ້ຖືກຕ້ອງ ຕາມລະບຽບລາຍ ຈ່າຍງົບປະມານຂອງລັດ.

   3.2. ໂດຍປະຕິບັດຕາມລະບຽບກົດໝາຍ ຫາກມີຜູ້ຂົ້າແຂ່ງຂັນລະເມີດ ຜູ້ຈັດຊື້ຕ້ອງໄດ້ປະຕິບັດດັ່ງນີ້:

   - ກ). ຕັດຜູ້ເຂົ້າແຂ່ງຂັນປະມູນນັ້ນອອກຈາກການແຂ່ງຂັນປະມູນດັ່ງກ່າວ ຫຼື ບໍ່ຮັບຮອງເອົາເປັນ ຜູ້ຊະນະການປະມູນ; ແລະ
   - ຂ). ຖ້າຫາກວ່າ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຖືກຕັດສິນວ່າ ມີການກະທໍາທີ່ພົວພັນກັບການສໍ້ລາດບັງຫລວງ ຫຼື ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫຼື ການບີບບັງຄັບໃນ ການແຂ່ງຂັນປະມູນ ຫຼື ມີການກະທໍາ ເພື່ອໃຫ້ຕົນເອງໄດ້ຮັບສັນຍາ. ຜູ້ເຂົ້າແຂ່ງຂັນປະມູນນັ້ນຈະຖືກປະກາດແຈ້ງການວ່າ ເປັນຜູ້ທີ່ບໍ່ມີຄວາມເໝາະສົມ, ພ້ອມທັງກໍານົດ ຫຼື ລະບຸເວລາ ທີ່ຖືກຫ້າມບໍ່ໃຫ້ ເຂົ້າຮ່ວມແຂ່ງຂັນປະມູນໃນການປະມູນຈັດຊື້ຂອງລັດ.

   3.3. ການກະທໍາທີ່ພົວພັນການສໍ້ລາດບັງຫຼວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫຼືການບີບບັງຄັບ ໃນທຸກໆຮູບແບບ ທີ່ໄດ້ກໍານົດໄວ້ຢູ່ໃນຂໍ້ທີ 3.4 ໂດຍທີ່ຜູ້ຈັດຊື້ ສາມາດຮູ້ເຫັນ ໄດ້ນັ້ນ. ຜູ້ຈັດຊື້ ຕ້ອງໄດ້ດໍາເນີນການແຕ່ທົ່ວທີໂລດກັບ ຜູ້ເຂົ້າແຂ່ງຂັນປະມູນນັ້ນ, ດ້ວຍການເຊີນເອົາ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ເຂົ້າມາອະທິບາຍ ແລະຊີ້ແຈງຕໍ່ຜູ້ຈັດຊື້. ຜູ້ຈັດຊື້ ຈະຮັບຮອງເອົາສະເພາະແຕ່ການອະທິບາຍທີ່ມີເຫດ ຜົນພຽງພໍເທົ່ານັ້ນ, ຖ້າຫາກວ່າ ຄໍາອະທິບາຍດັ່ງກ່າວນີ້ ບໍ່ເປັນໜ້າເຊື່ອຖືໄດ້ນັ້ນ, ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຕ້ອງຖືກຕັດອອກ ຈາກການປະມູນ ແລະເຫດຜົນດັ່ງກ່າວນີ້ ຕ້ອງໄດ້ບັນທຶກໄວ້ຢູ່ໃນບົດລາຍງານກ່ຽວກັບການດໍາເນີນການປະມູນ ແລະອອກແຈ້ງການ ໃນທັນທີທັນໃດ ເພື່ອແຈ້ງໃຫ້ ຜູ້ເຂົ້າແຂ່ງຂັນປະມູນທີ່ກ່ຽວຂ້ອງຮູ້ນໍາ. ທຸກໆການ ຕິດຕໍ່ພົວພັນ ລະຫວ່າງຜູ້ຈັດຊື້ ແລະຜູ້ເຂົ້າ

ແຂ່ງຂັນປະມູນ ທີ່ພົວພັນເຖິງມາດຕະການໃນການຢືນຢັນຄວາມຜິດ ຫຼື ການສໍ້ລາດບັງຫຼວງ ຕ້ອງໄດ້ຂຽນເປັນລາຍລັກອັກສອນ.

3.4. ລັດຖະບານ ໄດ້ກຳນົດຄວາມໝາຍຂອງຄຳສັບເຫຼົ່ານີ້ ເພື່ອເປັນຂໍ້ກຳນົດ ດັ່ງນີ້:

ກ. *"ພຶຕິກຳສໍ້ລາດບັງຫລວງ"* ໝາຍເຖິງ ການສະເໜີ, ເອົາໃຫ້ ຫຼືຮັບປາກວ່າຈະໃຫ້ ໂດຍທາງກົງ ຫຼືທາງອ້ອມ ຕໍ່ພະນັກງານຜູ້ໃດຜູ້ໜຶ່ງ ຫຼືພະນັກງານຕາມສັນຍາຂອງຜູ້ຈັດຊື້ ຫຼືອົງການລັດ ຫຼືອົງກອນເອກະຊົນ ຫຼືນິຕິບຸກຄົນ ດ້ວຍການໃຫ້ເປັນຂອງຂວັນໃນທຸກໆຮູບແບບ, ສິນບົນ ຫຼືການໃຫ້ດ້ວຍວັດຖຸສິ່ງຂອງ ຫຼືຄ່າບໍລິການ ເພື່ອເປັນການຈູງໃຈໃຫ້ມີການກະທຳ ຫຼື ຕັດສິນ ຫຼື ວິທີການໃກ້ສິດຕິດແທດກັບຜູ້ຈັດຊື້ ທີ່ພົວພັນກັບການດຳເນີນການປະມູນນັ້ນ.

ຂ. *"ພຶຕິກຳສໍ້ໂກງ"* ໝາຍເຖິງ ການສະເໜີຂໍ້ມູນທີ່ບິດເບືອນ ຫຼື ບໍ່ມີມູນຄວາມຈິງ, ທີ່ມີຜົນກະທົບຕໍ່ການດຳເນີນການປະມູນ ຫຼືການປະຕິບັດສັນຍາ ຊຶ່ງສ້າງຄວາມ ເສຍຫາຍໃຫ້ແກ່ຜູ້ຈັດຊື້.

ຄ. *"ພຶຕິກຳສົມຮູ້ຮ່ວມຄິດ"* ໝາຍເຖິງ ການມີແຜນ ແລະໄດ້ມີການກະກຽມໄວ້ກ່ອນແລ້ວ ລະຫວ່າງຜູ້ ເຂົ້າແຂ່ງ ຂັນປະມູນດ້ວຍກັນ ແຕ່ສອງ ຫຼືຫຼາຍຄົນຂຶ້ນໄປ, ໂດຍທີ່ຜູ້ຈັດຊື້ ບໍ່ໄດ້ຮູ້ຈັກ (ກ່ອນ ຫຼືພາຍຫລັງ ທີ່ໄດ້ຍື່ນຊອງປະມູນແລ້ວ) ເພື່ອສ້າງລາຄາປະມູນປອມ, ບໍ່ມີລັກຊະນະແຂ່ງຂັນ ທີ່ກະທົບເຖິງຜົນປະໂຫຍດຂອງຜູ້ຈັດຊື້ໃນຄວາມເປັນອິດສະຫຼະ, ຄວາມໂປ່ງໃສ ແລະ ການ ແຂ່ງຂັນທີ່ແທ້ຈິງ.

ງ. *"ພຶຕິກຳບີບບັງຄັບ"* ໝາຍເຖິງ ການສ້າງຄວາມເສັຍຫາຍ ແລະການຂົ່ມ-ຂູ່ເພື່ອໃຫ້ສ້າງຄວາມ ເສັຍຫາຍໃນທາງກົງ ຫລືທາງອ້ອມໂດຍບຸກ-ຄົນ ຫລື ດ້ວຍສິດອຳນາດຂອງເຂົາ ເພື່ອແຊກແຊງ ຕໍ່ການ ດຳເນີນການປະ-ມູນ ຫລືມີຜົນກະ-ທົບ ຕໍ່ການ-ຈັດ-ຕັ້ງ ປະ-ຕິ-ບັດສັນຍາ.

ຈ. "ພຶຕິກຳກີດກັ້ນ" ໝາຍເຖິງ

(1) ມີເຈດຕະນາເພື່ອທຳລາຍ, ປອມແປງ, ດັດແປງ ຫຼືປິດບັງຂໍ້ມູນຫຼັກຖານຕໍ່ການສອບສວນ ຫຼື ສ້າງຂໍ້ມູນທີ່ບິດເບືອນຕໍ່ພະນັກງານສືບສວນສອບສວນ, ລວມທັງປິດບັງຕໍ່ການສອບສວນຂອງລັດ ທີ່ຢັ້ງຢືນເຖິງການສໍ້ລາດບັງຫຼວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ແລະການບີບບັງຄັບ ແລະ/ຫຼື ການຂົ່ມຂູ່, ກໍ່ກວນ ຫຼືນາບຂູ່ຕໍ່ພາກສ່ວນໃດໜຶ່ງ ເພື່ອບໍ່ໃຫ້ເປີດເຜີຍຂໍ້ມູນຫຼັກຖານທີ່ພົວພັນເຖິງການສອບສວນ ຫຼືການປະຕິບັດການສອບສວນ; ຫຼື

(2) ມີເຈດຕະນາປິດບັງຂໍ້ມູນຫຼັກຖານຕໍ່ການດຳເນີນການກວດກາ ແລະການກວດສອບຂອງ ລັດ.

3.5. ລັດຖະບານ ຮຽກຮ້ອງໃຫ້ຜູ້ຈັດຊື້ ຫຼືບຸກຄົນທີ່ມີໜ້າ ທີ່ຮັບຜິດຊອບຕໍ່ການປະມູນ ຕ້ອງຊື່ສັດຕໍ່ໜ້າທີ່ຂອງຕົນ ໂດຍບໍ່ອາໃສຊ່ອງຫວ່າງຂອງລະບຽບການທີ່ໄດ້ກຳນົດໄວ້ແລ້ວນັ້ນໃນການຊັກຊວນ, ຮຽກຮ້ອງ ແລະ/ຫຼື ມີການບີບບັງຄັບ ເພື່ອຜົນປະໂຫຍດສ່ວນຕົວ ທີ່ພົວພັນກັບຂະບວນການ ທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງນີ້.

4. **ການດັດແກ້ ແລະ ການປ່ຽນແປງລາຄາ:** ມູນຄ່າສັນຍາຈະບໍ່ອະນຸຍາດໃຫ້ມີການດັດແກ້ ແລະ ມີການປ່ຽນແປງ ລາຄາໄດ້.

5. **ການຊຳລະເງິນ:** ຜູ້ຈັດຊື້ ຈະຊຳລະເງິນໃຫ້ແກ່ຜູ້ສະໜອງສິນຄ້າ ເປັນເງິນສະກຸນເງິນ ກີບ, ພາຍໃນ 30 ວັນ ຫຼັງຈາກທີ່ສິນຄ້າໄດ້ຖືກສົ່ງເຖິງສະຖານທີ່ ແລະຮັບຮອງຕາມທີ່ໄດ້ລະບຸໄວ້ຢູ່ໃນຂໍ້ທີ 8. ມູນຄ່າທັງໝົດຂອງສັນຍາ ຈະຖືກຈ່າຍ 100% ຫຼັງຈາກໄດ້ຮັບໃບຢັ້ງຢືນຮັບຮອງເອົາສິນຄ້າ ແລະ ໃບບິນ (ສະບັບຕົ້ນ 1 ສະບັບ ແລະ ສະບັບສຳເນົາ 3 ສະບັບ). ວິທີການຊຳລະແມ່ນປະຕິບັດຕາມທີ່ໄດ້ກຳນົດໃນໃບບິນຂອງຜູ້ສະໜອງສິນຄ້າ. ການຊຳລະອາກອນມູນຄ່າເພີ່ມ/ພາສີ ແລະຄ່າທຳນຽມຕ່າງໆ ທີ່ສະແດງໃນໃບບິນຂອງຜູ້ສະໜອງສິນຄ້າແມ່ນໃຫ້ປະຕິບັດຕາມຂໍ້ກຳນົດກົດລະບຽບ ທີ່ປະຕິບັດໃນເວລາປະກອບໃບບິນ.

6. **ເວລາສົ່ງມອບ:** ສິນຄ້າທັງຫມົດຕ້ອງສົ່ງໃຫ້ຜູ້ຈັດຊື້ໃນ 30 ວັນ ເລີ່ມແຕ່ວັນ ທີ່ໄດ້ອອກໃບສັ່ງຊື້.

7. **ກໍລະນີສົ່ງມອບສິນຄ້າຊ້າ:** ຖ້າຫາກວ່າ ຜູ້ສະໜອງສິນຄ້າ ຫາກມີການຊັກຊ້າ ໃນການສົ່ງມອບສິນຄ້າ ບໍ່ໄປຕາມກຳນົດເວລາທີ່ກຳນົດໄວ້ໃນຂໍ້ທີ 5. ຜູ້ຈັດຊື້ ມີສິດໃນການຫັກເງິນ ເປັນຈຳນວນ 0,05% ຕໍ່ວັນ ທີ່ຊັກຊ້າ ຈາກມູນຄ່າສັນຍາ ແລະການຫັກເງິນຈະຫລຸດລົງສູງສຸດຮອດ 10% ຂອງມູນຄ່າສັນຍາ, ຫຼັງຈາກນັ້ນ ຜູ້ຈັດຊື້ອາດຈະພິຈາລະນາຍົກເລີກສັນຍາສະບັບນີ້.

8. **ການຫຸ້ມຫໍ່:** ຜູ້ສະໜອງສິນຄ້າ ຕ້ອງຮັບປະກັນວ່າ ສິນຄ້າດັ່ງກ່າວຕ້ອງໄດ້ບັນຈຸ ແລະຫຸ້ມຫໍ່ໃຫ້ດີ ເພື່ອຮັບປະກັນ ບໍ່ໃຫ້ມີການເປ່ເພ ແລະເສຍຫາຍໃນການຂົນສົ່ງຮອດສະຖານທີ່ສົ່ງມອບ.

9. **ການກວດກາ:** ພາຍໃນ ສາມ (03) ວັນ ທີ່ໄດ້ສົ່ງມອບແລ້ວ, ຜູ້ຈັດຊື້ ຕ້ອງໄດ້ກວດກາສິນຄ້າທີ່ໄດ້ສົ່ງມາຮອດແລ້ວ ຫຼື ປະຕິເສດ ແລະບໍ່ຍອມຮັບຮອງເອົາສິນຄ້ານັ້ນ, ຖ້າຫາກວ່າ ສິນຄ້ານັ້ນບໍ່ຖືກຕ້ອງຕາມມາດຕະຖານເຕັກນິກທີ່ຕ້ອງການ. ການຈ່າຍເງິນຄ່າສິນຄ້າຕາມສັນຍາສະບັບນີ້ຈະບໍ່ຈ່າຍໃຫ້ ແລະບໍ່ອອກໜັງສືຢັ້ງຢືນຮັບຮອງເອົາສິນຄ້ານັ້ນ.

10. **ການລະເມີດລິຂະສິດ:** ຜູ້ສະໜອງສິນຄ້າຕ້ອງຮັບປະກັນການນຳໃຊ້ສິນຄ້າ ທີ່ສະໜອງໃຫ້ຜູ້ຈັດຊື້ພາຍໃຕ້ ສັນຍາສະບັບນີ້ ບໍ່ໄດ້ລະເມີດຕໍ່ສິດທິບັດ, ຮູບແບບ, ຊື່ການຄ້າ ແລະຍີ່ຫໍ້. ນອກຈາກນີ້, ຜູ້ສະໜອງສິນຄ້າ ຕ້ອງໄດ້ຮັບຜິດຊອບຕໍ່ການຮັບປະກັນ, ການທົດແທນຄ່າເສຍຫາຍ, ການປ້ອງກັນ ແລະປົກປ້ອງຕໍ່ຜູ້ຈັດຊື້ ບໍ່ໃຫ້ຕົກຢູ່ທ່າຮັບຈາກທຸກໆການກະທຳ ຫຼື ການຮຽກຮ້ອງ ຕໍ່ຜູ້ຈັດຊື້ທີ່ພົວພັນກັບການລະເມີດຕໍ່ສິດທິບັດ, ຮູບແບບ, ຊື່ການຄ້າ ແລະຍີ່ຫໍ້ ທີ່ເກີດຂຶ້ນຈາກສິນຄ້າທີ່ສະໜອງໃຫ້ພາຍໃຕ້ສັນຍາສະບັບນີ້.

11. **ການຮັບປະກັນ:** ຜູ້ສະໜອງສິນຄ້າຕ້ອງຮັບປະກັນ ຕາມທີ່ກຳນົດໄວ້ຢູ່ໃນເອກະສານສົມທຽບລາຄາ ໝວດທີ 4, ສຳລັບສິນຄ້າທີ່ສະໜອງໃຫ້ຕາມສັນຍາສະບັບນີ້ ຕ້ອງແມ່ນເຄື່ອງໃໝ່ ແລະຍັງບໍ່ທັນໄດ້ນຳໃຊ້ເທື່ອ. ຜູ້ສະໜອງສິນຄ້າຕ້ອງຮັບປະກັນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນ ເອກະສານປະມູນ ຫຼືການສະເຫນີລາຄາ. ຖ້າຫາກວ່າສິນຄ້າ ທີ່ສະໜອງໃຫ້ນັ້ນ ຫາກເປ່ເພຢູ່ໃນໄລຍະການ

ຮັບປະກັນ ຫຼືໃນເວລານຳສົ່ງ/ຕິດຕັ້ງ. ຖ້າຫາກວ່າ, ສິນຄ້າດັ່ງກ່າວນັ້ນ ຫາກນຳໃຊ້ບໍ່ໄດ້, ຜູ້ສະໜອງສິນຄ້າ ຕ້ອງໄດ້ຮັບຜິດຊອບ ຕໍ່ການເປ່ເພ ຫຼືປ່ຽນແທນໃຫ້ໃໝ່ ພາຍໃນ 30 ວັນ.

12. **ການຍົກເລີກສັນຍາ:** ຜູ້ຈັດຊື້ສາມາດຍົກເລີກການສັ່ງຊື້ ແລະສັນຍາທັງໝົດ ຫຼືບາງສ່ວນໄດ້ໃນທຸກໆເວລາ ໂດຍຈະແຈ້ງເປັນລາຍລັກອັກສອນຫາຜູ້ສະໜອງສິນຄ້າ, ຖ້າຫາກວ່າເກີດເຫດການດັ່ງນີ້:

   ກ. ຖ້າຫາກວ່າຜູ້ສະໜອງສິນຄ້າບໍ່ສົ່ງສິນຄ້າຄົບຖ້ວນ ຫຼືບໍ່ສົ່ງຕາມກຳນົດເວລາ ທີ່ໄດ້ລະບຸໄວ້ຢູ່ໃນ ໃບສັ່ງຊື້/ສັນຍາ; ຫຼື

   ຂ. ຖ້າຫາກວ່າ ຜູ້ສະໜອງສິນຄ້າບໍ່ປະຕິບັດຕາມຄວາມ ຮັບຜິດຊອບໃນພັນທະຂອງຕົນ ຕາມໃບສັ່ງຊື້ ແລະສັນຍາສະບັບນີ້; ຫຼື

   ຄ. ຖ້າຫາກວ່າມີເຫດການໃດໜຶ່ງເກີດຂື້ນ ຜູ້ສະໜອງສິນຄ້າບໍ່ໄດ້ມີການແກ້ໄຂໃດໆ ພາຍໃນໄລຍະ 3 (ສາມ) ວັນ, ຫຼັງຈາກທີ່ໄດ້ຮັບແຈ້ງການການກະທຳຜິດຈາກຜູ້ຈັດຊື້ ແລະໄດ້ລະບຸການກະທຳຜິດນັ້ນ; ຫຼື

   ງ. ຖ້າຫາກວ່າຜູ້ຈັດຊື້ຫາກຮູ້ເຫັນໄດ້ວ່າຜູ້ສະໜອງສິນຄ້າມີເຈດຕະນາສໍ້ໂກງ ແລະມີພຶດຕິກຳສໍ້ລາດບັງ ຫຼວງໃນການແຂ່ງຂັນ ຫຼືໃຊ້ອຳນາດບີບບັງຄັບໃຫ້ອອກໃບສັ່ງຊື້ນີ້.

13. **ການແກ້ໄຂຂໍ້ຂັດແຍ່ງ:** ຖ້າຫາກວ່າເກີດມີຂໍ້ຂັດແຍ່ງທີ່ເກີດຂື້ນ ລະຫວ່າງສອງຝ່າຍ ທີ່ພົວພັນກັບເນື້ອໃນຂອງສັນຍາສະບັບນີ້, ແຕ່ລະຝ່າຍຕ້ອງໄດ້ແກ້ໄຂຂໍ້ຂັດແຍ່ງດັ່ງກ່າວນີ້ ໂດຍຜ່ານການປຶກສາຫາລືກັນ ຫຼາຍຝ່າຍ ແລະຮ່ວມມືຊື່ງກັນ ແລະກັນ. ຖ້າຫາກວ່າ ແຕ່ລະຝ່າຍຍັງບໍ່ພໍໃຈໃນການແກ້ໄຂຂໍ້ຂັດແຍ່ງ, ວິທີການແກ້ໄຂຂໍ້ຂັດແຍ່ງ ແມ່ນຈະດຳເນີນການດ້ວຍການໄກ່ເກ່ຍ ໂດຍຜູ້ໄກ່ເກ່ຍ ທີ່ໄດ້ຮັບການແຕ່ງຕັ້ງເຫັນດີຈາກຫຼາຍຝ່າຍ ແລະ ການຕັດສິນຂອງຜູ້ໄກ່ເກ່ຍຕ້ອງໄດ້ຍ່ອມຮັບໂດຍທຸກໆຝ່າຍ.

# ໝວດທີ 4: ແບບຟອມຍື່ນສົມທຽບລາຄາ

ໂລໂກບໍລິສັດ/ຊື່ບໍລິສັດ: ...............................................................

ທີ່ຢູ່ :.........................................................................................  ວັນທີ: ....................

ເຖິງ: ກົມທາງນ້ຳ, ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຮຽນ: ທ່ານ ຫົວໜ້າກົມທາງນ້ຳ ທີ່ນັບຖື,

- ອີງຕາມໜັງສືເຊີນເຂົ້າຮ່ວມສົມທຽບລາຄາ, ສະບັບເລກທີ ................., ລົງວັນທີ:.............

ຂ້າພະເຈົ້າໄດ້ສຶກສາເອກະສານສະເໜີສົມທຽບລາຄາໂດຍໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງລະອຽດຖີ່ຖ້ວນແລ້ວ, ຈຶ່ງຂໍຢັ້ງຢືນດ້ວຍກຽດເພື່ອສະໜອງອຸປະກອນໄອທີ (IT Equipment) ຕາມຄວາມຕ້ອງການທີ່ກຳນົດໄວ້ຢູ່ໃນ ເອກະສານສະເໜີສົມທຽບລາຄາເປັນລາຄາລວມທັງໝົດ:

- ຊຽນເປັນຕົວເລກ: ..........................................................................................ກີບ.

- ຊຽນເປັນຕົວໜັງສື: .......................................................................................ກີບ.

ຖ້າຫາກວ່າ ການສະເໜີລາຄາຂອງຂ້າພະເຈົ້າໄດ້ຖືກຮັບຮອງເອົາ, ຂ້າພະເຈົ້າຮັບປະກັນວ່າ ຈະສົ່ງມອບສິນຄ້າດັ່ງກ່າວນີ້ ພາຍໃນ ................ ວັນ ໂດຍເລີ່ມຈາກວັນທີ່ໄດ້ຮັບໃບສັ່ງຊື້ຂອງທ່ານ, ໂດຍສອດຄ່ອງ ກັບເວລາສົ່ງມອບສິນຄ້າທີ່ກຳນົດໄວ້ຢູ່ໃນຂໍ້ທີ 5 ຂອງເງື່ອນໄຂສັນຍາ.

ຂ້າພະເຈົ້າ ຂໍຢັ້ງຢືນວ່າບໍ່ໄດ້ຍື່ນເອກະສານສົມທຽບລາຄາໃນການສົມທຽບລາຄານີ້ ຫຼາຍກວ່າໜຶ່ງຊອງສຳລັບການສົມທຽບລາຄານີ້. ເອກະສານສົມທຽບລາຄາຂອງຂ້າພະເຈົ້າ ມີຜົນໃຊ້ໄດ້ຕາມໄລຍະເວລາ ................ວັນ ຫຼັງຈາກເວລາປິດຮັບຊອງສົມທຽບລາຄາ.

ຂ້າພະເຈົ້າຂໍແຈ້ງວ່າ ບໍລິສັດຂອງຂ້າພະເຈົ້າ ແລະ ຜູ້ຮັບເໝົາຕໍ່ທຸກໆຄົນ ຫຼື ຜູ້ຮັບຜິດຊອບໃນບາງວຽກບໍ່ແມ່ນຜູ້ທີ່ ທະນາຄານໂລກ ໄດ້ປະກາດເປັນບໍລິສັດທີ່ບໍ່ມີຄວາມເໝາະສົມ ໃນການກະທຳທີ່ພົວພັນກັບການ ສໍ້ລາດບັງຫຼວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫຼືການບີບບັງຄັບ. ຂ້າພະເຈົ້າຂໍໃຫ້ຄຳໝັ້ນສັນຍາຕື່ມອີກວ່າຈະບໍ່ພົວພັນກັບການກະທຳດັ່ງກ່າວນີ້ໃນຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດສັນຍາສະບັບນີ້.

ຂ້າພະເຈົ້າຮັບຮູ້ວ່າໃບສັ່ງຊື້ຂອງທ່ານຈະປະກອບເປັນການຮັບຮອງເອົາການສົມທຽບລາຄາ ຂອງຂ້າພະເຈົ້າ ແລະຖືວ່າເປັນຂໍ້ຜູກມັດລະຫວ່າງພວກເຮົາ ຈົນກວ່າຈະໄດ້ເຊັນສັນຍາ.

ຂ້າພະເຈົ້າເຫັນດີເຫັນພ້ອມວ່າທ່ານບໍ່ມີຄວາມຈຳເປັນທີ່ຈະຕ້ອງຮັບຮອງເອົາຊອງສົມທຽບລາຄາ ທີ່ສະເໜີລາຄາຕ່ຳທີ່ສຸດ ຫຼືທຸກໆຊອງປະມູນທີ່ທ່ານໄດ້ຮັບ.

**ລາຍເຊັນຂອງຜູ້ທີ່ໄດ້ຮັບອະນຸມັດໃຫ້ເຊັນເອກະສານປະມູນນີ້**

ຊື່ ແລະຕຳແໜ່ງຂອງເຈົ້າຂອງລາຍເຊັນ: ........................................

# ໝວດທີ5: ລາຍການສິນຄ້າ ແລະ ການສະເໜີລາຄາ

| ລຳ ດັບ | ຊື່ຂອງສິນຄ້າ ແລະ ລາຍລະອຽດຂອງສິນຄ້າ | ຫົວ ໜ່ວຍ | ຈຳນວນ ລວມ | ລາຄາຫົວໜ່ວຍທີ່ລວມ ພາສີ, ອາກອນຕ່າງໆ, ຄ່າຂົນສົ່ງ ແລະ ປະກັນໄພ ຮອດສະຖານທີ່ສົ່ງມອບ | | | | ລາຄາລວມ (USD) |
|---|---|---|---|---|---|---|---|---|
| | | | | ນະຄອນຫຼວງວຽງຈັນ (VTE) | | ແຂວງອຸດົມໄຊ (OUX) | | |
| | | | | ຈຳນວນ (1) | USD (2) | ຈຳນວນ (3) | USD (4) | (5)=(1)*(2) + (3)*(4) |
| 1 | ຄອມພິວເຕີ ຕັ້ງໂຕະ (ຮອງຮັບໂປຼແກມອອກແບບ-ຄິດໄລ່)<br>Desktop computer (for Graphics Design software) | ຊຸດ | 2 | 1 | | 1 | | |
| 2 | ຄອມພິວເຕີ ຕັ້ງໂຕະ<br>Desktop computer | ຊຸດ | 6 | 3 | | 3 | | |
| 3 | ຄອມພິວເຕີໂນດບຸກ<br>Laptop computer | ຊຸດ | 8 | 5 | | 3 | | |
| 4 | ໂປຼແກມ ປ້ອງກັນໄວລັດສ໌ ຄອມພິວເຕີ<br>Antivirus software | ໂປຼ ແກມ | 4 | 2 | | 2 | | |
| 5 | ໂປຼແກມ ການຄິດໄລ່ບັນຊີ<br>Antivirus software | ໂປຼ ແກມ | 2 | 1 | | 1 | | |
| 6 | ໝໍ້ແບ່ງເກັບໄຟ ສຳລັບຄອມພິວເຕີ້<br>UPS Battery Backup, Surge Protection | ຊຸດ | 8 | 4 | | 4 | | |
| 7 | ເຄື່ອງສາຍ LCD ແລະ ໜ້າຈໍຜ້າສາກ<br>LCD Projector and Screen | ຊຸດ | 2 | 1 | | 1 | | |
| 8 | ປິນເຕີ ສີ-ຂາວດຳ ສຳລັບເຈ້ຍ A4-A3<br>Black and Color Printer A4- A3 | ຊຸດ | 4 | 2 | | 2 | | |
| 9 | ເຄື່ອງກ່ອບປີເອກະສານ<br>Photocopy Machine | ຊຸດ | 2 | 1 | | 1 | | |
| 10 | ເຄື່ອງກະຈາຍ Wi-Fi ພ້ອມສາຍເຊື່ອມຕໍ່ຕ່າງໆ<br>Wi-Fi and Cable modem router | ຊຸດ | 2 | 1 | | 1 | | |
| 11 | ອຸປະກອນເກັບຂໍ້ມູນ 1T<br>External Hard Disk 1T | ຊຸດ | 3 | 2 | | 1 | | |

| ລຳ ດັບ | ຊື່ຂອງສິນຄ້າ ແລະ ລາຍລະອຽດຂອງສິນຄ້າ | ຫົວ ໜ່ວຍ | ຈຳນວນ ລວມ | ລາຄາຫົວໜ່ວຍທີ່ລວມ ພາສີ, ອາກອນຕ່າງໆ, ຄ່າຂົນສົ່ງ ແລະ ປະກັນໄພ ຮອດສະຖານທີ່ສົ່ງມອບ | | | | ລາຄາລວມ (USD) (5)=(1)*(2) + (3)*(4) |
|---|---|---|---|---|---|---|---|---|
| | | | | ນະຄອນຫຼວງວຽງຈັນ (VTE) | | ແຂວງອຸດົມໄຊ (OUX) | | |
| | | | | ຈຳນວນ (1) | USD (2) | ຈຳນວນ (3) | USD (4) | |
| 12 | USB ຂະໜາດບັນຈຸ 32 Gb<br>USB Flash drive 32 Gb | ອັນ | **12** | 6 | | 6 | | |
| 13 | ກ້ອງຖ່າຍຮູບ ດິຈິຕອນ<br>Digital Camera | ຊຸດ | 2 | 1 | | 1 | | |
| 14 | ໂທລະສັບຕັ້ງໂຕ ພ້ອມເຄື່ອງແຟກເອກະສານ<br>Codes Phone (with Fax) | ຊຸດ | 2 | 1 | | 1 | | |
| 15 | ຈັກຄິດໄລ່ ສຳລັບວຽກວິສະວະກຳ<br>Calculator Engineering Function | ອັນ | 2 | 1 | | 1 | | |
| | **<u>ລາຄາລວມ:</u>** | | | | | | | |

| | |
|---|---|
| ລາຄາລວມຂຽນເປັນຕົວໜັງສື | |
| ສະເໜີສົ່ງມອບ | (ຈຳນວນ ວັນ, ເດືອນ): |
| ການຮັບປະກັນ | (ຈຳນວນ ວັນ, ເດືອນ): |

ວັນທີ:

**ລາຍເຊັນ ແລະ ຈ້ຳກາຂອງຜູ້ສະໜອງສິນຄ້າ**

# ໝວດທີ 6: ມາດຕະຖານເຕັກນິກ

| ລຳ ດັບ | ເລກລະຫັດ ຫລື ລາຍການສິນຄ້າ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ຕ້ອງການ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ສະເໜີໂດຍຜູ້ສະໜອງສິນຄ້າ |
|---|---|---|---|
| 1 | ຄອມພິວເຕີ ຕັ້ງໂຕະ<br>(ຮອງຮັບໂປຼແກມອອກແບບ-ຄິດໄລ່)<br><br>Desktop computer<br>(for Graphics Design software) | • Intel® Core ≥ i7<br>• Ram : ≥ 8 GB<br>• Hard disk: ≥ 1Tb<br>• LED 18.5”-21.5”<br>• Intel HD Graphics<br>• DVD Writer, Wireless, Bluetooth<br>• Window license (64bit) English<br>• Keyboard, Mouse, Speaker | |
| 2 | ຄອມພິວເຕີ ຕັ້ງໂຕະ<br>Desktop computer | • Intel® Core ≥ i5<br>• Ram : ≥ 4 GB<br>• Hard disk: ≥ 1Tb<br>• LED 18.5”-21.5”<br>• Intel HD Graphics<br>• DVD Writer, Wireless, Bluetooth<br>• Window license (64bit) English<br>• Keyboard, Mouse, Speaker | |
| 3 | ຄອມພິວເຕີໂນດບຸກ<br>Laptop computer | • Intel® Core ≥ i7<br>• Ram: ≥ 8 GB<br>• Hard disk: ≥ 1Tb<br>• LED 12”-14” Intel HD Graphics<br>• DVD Writer, Wireless, Bluetooth<br>• Window license (64bit) English<br>• Pen and Touch Screen | |

| ລຳ ດັບ | ເລກລະຫັດ ຫລື ລາຍການສິນຄ້າ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ຕ້ອງການ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ສະເໜີໂດຍຜູ້ສະໜອງສິນຄ້າ |
|---|---|---|---|
| 4 | ໂປຼແກມ ປ້ອງກັນ ໄວລັດສ໌ ຄອມພິວເຕີ<br>Antivirus software | • 1 years license | |
| 5 | ໂປຼແກມ ການຄິດໄລ່ບັນຊີ<br>Antivirus software | • 1 years license | |
| 6 | ໝໍ້ແບ່ງເກັບໄຟ ສຳລັບຄອມພິວເຕີ້<br>UPS Battery Backup, Surge Protection | • Rating: ≥ 1000AV/ 600 W Battery Backup<br>• Standby UPS System<br>• UPS Input & Output: 220V<br>• ≥ 6 Total Outlets: 3 Outlets provide Battery Backup and Surge Protection; 3 Outlets offer Power Surge Protection. | |
| 7 | ເຄື່ອງສາຍ LCD ແລະ ໜ້າຈໍຜ້າສາກ<br>LCD Projector and Screen | • 3200 lm - 4200 lm<br>• 15000:1 LCD<br>• WXGA: 1000 - 1200 x 800 - 1200<br>• HDMI Input<br>• 1 Year Guarantee<br>• Projector Screen with Stand Leg<br>• 160° Viewing Angle<br>• Screen 100 inch<br>• Easy to Clean | |
| 8 | ປິນເຕີ ສີ-ຂາວດຳ ສຳລັບເຈ້ຍ A4-A3<br>Black and Color Printer A4- A3 | • Print, Scan, copy, LAN<br>• Wireless Printer Server<br>• Ink black-color<br>• Printer L1300-1800 A4-A3+<br>• Speed up to 35 ppm | |
| 9 | ເຄື່ອງກ່ອບປີເອກະສານ<br>Photocopy Machine | • Wireless Printer and scanner Server<br>• Speed 20 - 28 ppm<br>• Black & white color<br>• 1 Year Guarantee | |

| ລຳ ດັບ | ເລກລະຫັດ ຫລື ລາຍການສິນຄ້າ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ຕ້ອງການ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ສະເຫນີໂດຍຜູ້ສະຫນອງສິນຄ້າ |
|---|---|---|---|
| 10 | ເຄື່ອງກະຈາຍ Wi-Fi ພ້ອມສາຍເຊື່ອມຕໍ່ຕ່າງໆ<br>Wi-Fi Router and Cable modem router | • Wireless Router and Access Point<br>• TP-LINK 3G/4G Router<br>• LAN and USB port for Printer 3G/4G<br>• Frequency Range (MHz): 2.4GHz/5GHz<br>• ≤ 1000 Mbps | |
| 11 | ອຸປະກອນເກັບຂໍ້ມູນ 1T<br>External Hard Disk 1T | • Hard Disk Size:1.0 TB<br>• Hardware Interface: usb 3.0<br>• Memory Storage Capacity:1.0 TB<br>• Hard Disk Description: Desktop/Portable<br>• Operating System: Windows, Mac, Linux, Android OS.<br>• Including Cable Cord Adapter 0.3/1.5m 5Gbp/s Transfer Rate. | |
| 12 | USB ຂະໜາດບັນຈຸ 32 Gb<br>USB Flash drive 32 Gb | • Hardware Interface : USB<br>• Memory Storage Capacity: 32.0 GB | |
| 13 | ກ້ອງຖ່າຍຮູບ ດີຈິຕອນ<br>Digital Camera | • Digital Rebel SLR Camera Kit with EF-S 18-55mm f/3.5-5.6 IS II Lens,<br>• 32GB Memory Card | |
| 14 | ໂທລະສັບຕັ້ງໂຕ ພ້ອມເຄື່ອງ Fax ແບບປຸ່ມເຕີ<br>Codes Phone (with Fax) | • Laser Fax machine<br>• Modem Speed 33.6 Kbps Super G3<br>• Memory 16MB<br>• Automatic Document Feeder (ADF) Up to 20-sheet<br>• Time-saving Features Stores up to 222 contacts<br>• print, copy and scan capability | |

| ລຳ ດັບ | ເລກລະຫັດ ຫລື ລາຍການສິນຄ້າ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ຕ້ອງການ | ມາດຕະຖານເຕັກນິກ ຂອງສິນຄ້າທີ່ສະເຫນີໂດຍຜູ້ສະຫນອງສິນຄ້າ |
|---|---|---|---|
| 15 | ຈັກຄິດໄລ່ ສຳລັບວຽກວິສະວະກຳ<br>Calculator Engineering Function | • Scientific/Engineering Calculators<br>• Two Way Power Standard Function Calculators<br>• Professional grade scientific calculator<br>• 2-line display shows entry and calculated result at same time<br>• Three angle modes (degrees, radians, and grads) and scientific and engineering notation modes<br>• Protective hard case | |

ວັນທີ:

**ລາຍເຊັນ ແລະ ຈ້ຳກາຂອງຜູ້ສະໜອງສິນຄ້າ**

## ໝວດທີ 7: ຕາຕະລາງການສົ່ງມອບສິນຄ້າ

| ລຳດັບ | ຊື່ຂອງສິນຄ້າ ແລະ ລາຍລະອຽດຂອງສິນຄ້າ | ຫົວໜ່ວຍ | ຈຳນວນທີ່ຕ້ອງການ | ບ່ອນສົ່ງ | | ກຳນົດເວລາທີ່ຕ້ອງການ (ວັນ) |
|---|---|---|---|---|---|---|
| | | | | ນະຄອນຫຼວງວຽງຈັນ ກະຊວງ ຍທຂ, ກົມທາງນ້ຳ (ຈຳນວນ) | ແຂວງອຸດົມໄຊ ພະແນກ ຍທຂ ແຂວງອຸດົມໄຊ (ຈຳນວນ) | |
| 1 | ຄອມພິວເຕີ ຕັ້ງໂຕະ (ຮອງຮັບໂປຼແກມອອກແບບ-ຄິດໄລ່)<br>Desktop computer (for Graphics Design software) | ຊຸດ | 2 | 1 | 1 | 30 ວັນ |
| 2 | ຄອມພິວເຕີ ຕັ້ງໂຕະ<br>Desktop computer | ຊຸດ | 6 | 3 | 3 | 30 ວັນ |
| 3 | ຄອມພິວເຕີໂນດບຸກ<br>Laptop computer | ຊຸດ | 8 | 5 | 3 | 30 ວັນ |
| 4 | ໂປຼແກມ ປ້ອງກັນໄວລັດສ໌ ຄອມພິວເຕີ<br>Antivirus software | ໂປຼແກມ | 4 | 2 | 2 | 30 ວັນ |
| 5 | ໂປຼແກມ ການຄິດໄລ່ບັນຊີ<br>Antivirus software | ໂປຼແກມ | 2 | 1 | 1 | 30 ວັນ |
| 6 | ໝໍ້ແບ່ງເກັບໄຟ ສຳລັບຄອມພິວເຕີ້<br>UPS Battery Backup, Surge Protection | ຊຸດ | 8 | 4 | 4 | 30 ວັນ |
| 7 | ເຄື່ອງສາຍ LCD ແລະ ໜ້າຈໍຜ້າສາກ<br>LCD Projector and Screen | ຊຸດ | 2 | 1 | 1 | 30 ວັນ |
| 8 | ປິນເຕີ ສີ-ຂາວດຳ ສຳລັບເຈ້ຍ A4-A3<br>Black and Color Printer A4- A3 | ຊຸດ | 4 | 2 | 2 | 30 ວັນ |
| 9 | ເຄື່ອງກ໋ອບປີເອກະສານ<br>Photocopy Machine | ຊຸດ | 2 | 1 | 1 | 30 ວັນ |
| 10 | ເຄື່ອງກະຈາຍ Wi-Fi ພ້ອມສາຍເຊື່ອມຕໍ່ຕ່າງໆ<br>Wi-Fi and Cable modem router | ຊຸດ | 2 | 1 | 1 | 30 ວັນ |
| 11 | ອຸປະກອນເກັບຂໍ້ມູນ 1T<br>External Hard Disk 1T | ຊຸດ | 3 | 2 | 1 | 30 ວັນ |

| ລຳ ດັບ | ຊື່ຂອງສິນຄ້າ ແລະ ລາຍລະອຽດຂອງສິນຄ້າ | ຫົວ ໜ່ວຍ | ຈຳນວນທີ່ ຕ້ອງການ | ບ່ອນສົ່ງ | | ກຳນົດເວລາ ທີ່ຕ້ອງການ (ວັນ) |
|---|---|---|---|---|---|---|
| | | | | ນະຄອນຫຼວງວຽງຈັນ ກະຊວງ ຍທຂ, ກົມທາງນ້ຳ (ຈຳນວນ) | ແຂວງອຸດົມໄຊ ພະແນກ ຍທຂ ແຂວງອຸດົມໄຊ (ຈຳນວນ) | |
| 12 | USB ຂະໜາດບັນຈຸ 32 Gb<br>USB Flash drive 32 Gb | ອັນ | 12 | 6 | 6 | 30 ວັນ |
| 13 | ກ້ອງຖ່າຍຮູບ ດີຈິຕອນ<br>Digital Camera | ຊຸດ | 2 | 1 | 1 | 30 ວັນ |
| 14 | ໂທລະສັບຕັ້ງໂຕ ພ້ອມເຄື່ອງແຟກເອກະສານ<br>Codes Phone (with Fax) | ຊຸດ | 2 | 1 | 1 | 30 ວັນ |
| 15 | ຈັກຄິດໄລ່ ສຳລັບວຽກວິສະວະກຳ<br>Calculator Engineering Function | ຊຸດ | 2 | 1 | 1 | 30 ວັນ |

ວັນທີ:

**ລາຍເຊັນ ແລະ ຈ້ຳກາຂອງຜູ້ສະໜອງສິນຄ້າ**

# ໝວດທີ 8: ຮູບຕົວຢ່າງສິນຄ້າ

ຜູ້ສະໜອງສິນຄ້າ ຕ້ອງລະບຸຍີ່ຫໍ້/ໂມແດນ (ທີ່ຮັບຮອງໄດ້) ຂອງສິນຄ້າທີ່ສະໜອງ ແລະຕ້ອງຄັດຕິດຕົ້ນສະບັບ ຂອງສິ່ງພິມໂຄສະນາຂອງສິນຄ້າ/ກາຕາລອກແຕ່ລະລາຍການ.(ຖ້າຫາກວ່າຕ້ອງການ)

## ໝວດທີ 9: ສັນຍາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

# ສັນຍາ

ສັນຍາເລກທີ:

ສັນຍາສະບັບນີ້ ໄດ້ສ້າງຂື້ນໃນວັນທີ.......... ລະຫວ່າງ ຝ່າຍໜຶ່ງ (ຊື່ ແລະທີ່ຢູ່ຂອງເຈົ້າຂອງໂຄງການ) (ຕໍ່ໄປນີ້ເອີ້ນວ່າ ຜູ້ຈັດຊື້) ແລະອີກຝ່າຍໜຶ່ງ (ຊື່ ແລະທີ່ຢູ່ບໍລິສັດ ..............(ຕໍ່ໄປນີ້ເອີ້ນວ່າ ຜູ້ສະໜອງສິນຄ້າ).

ພ້ອມດຽວກັນນີ້, ຜູ້ຈັດຊື້ໄດ້ສະເໜີຕົກລົງໃຫ້ຜູ້ສະໜອງສິນຄ້າສະໜອງ (ຊື່ຂອງສິນຄ້າ) ແລະຜູ້ຈັດຊື້ ໄດ້ຮັບຮອງເອົາການສົມທຽບລາຄາຂອງຜູ້ສະໜອງສິນຄ້າ ໃນການສະໜອງສິນຄ້າດັ່ງກ່າວ ໃນມູນຄ່າລວມທັງໝົດ (ລາຄາເປັນຕົວເລກ ແລະຕົວໜັງສື) (ຕໍ່ໄປນີ້ເອີ້ນວ່າ: ມູນຄ່າສັນຍາ).

1. ບັນດາເອກະສານທີ່ປະກອບເປັນສັນຍາ ໄດ້ຈັດລຽງຕາມລະດັບຄວາມສຳຄັນ ດັ່ງນີ້:

(ກ). ສັນຍາສະບັບນີ້ ທີ່ໄດ້ເຊັນກັນລະຫວ່າງສອງຝ່າຍ.

(ຂ). ເງື່ອນໄຂຂອງສັນຍາ.

(ຄ). ຕາຕະລາງລາຍການສິນຄ້າ ແລະລາຄາ.

(ງ). ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະໜອງໃຫ້.

(ຈ). ຕາຕະລາງການສົ່ງມອບສິນຄ້າ.

2. ຜູ້ຈັດຊື້ ເຫັນດີພິຈາລະນາຈ່າຍເງິນໃຫ້ແກ່ຜູ້ສະໜອງສິນຄ້າ ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ 4 ຂອງເງື່ອນໄຂຂອງສັນຍາ. ພ້ອມດຽວກັນນີ້, ຜູ້ສະໜອງສິນຄ້າໄດ້ຕົກລົງເຫັນດີກັບຜູ້ຈັດຊື້ ຕ້ອງສະໜອງສິນຄ້າ ແລະ ໄດ້ດັດແປງແກ້ໄຂຄວາມເສັຽຫາຍທຸກໆຢ່າງທີ່ມີ ໃຫ້ຖືກຕ້ອງຕາມທຸກໆຂໍ້ກຳນົດຂອງສັນຍາສະບັບນີ້.

3. ພ້ອມດຽວກັນນີ້, ຜູ້ຈັດຊື້ ໄດ້ຕົກລົງເຫັນດີວ່າ ຕ້ອງຈ່າຍເງິນໃຫ້ແກ່ຜູ້ສະໜອງສິນຄ້າ ຕາມການ ພິຈາລະນາຢັ້ງຢືນ ຕາມຂໍ້ກຳນົດຂອງສິນຄ້າ ແລະໄດ້ດັດແປງແກ້ໄຂຄວາມເສັຽຫາຍທຸກໆຢ່າງທີ່ມີ ໃນມູນຄ່າຂອງສັນ ຍາຫລືຈຳນວນເງິນອື່ນໆທີ່ຕ້ອງໄດ້ຊຳລະພາຍໃຕ້ຂໍ້ກຳນົດຂອງສັນຍາຕາມເວລາ ແລະ ວິທີການທີ່ໄດ້ກຳນົດໄວ້ຢູ່ໃນ ຂໍ້ທີ 4 ຂອງເງື່ອນໄຂສັນຍາ.

ສະນັ້ນ, ເພື່ອເປັນຫລັກຖານແກ່ທັງສອງຝ່າຍ, ຈຶ່ງໄດ້ຕົກລົງປະຕິບັດສັນຍາສະບັບນີ້ ໂດຍສອດຄ່ອງກັບກົດໝາຍ ຂອງ ສປປ ລາວ ຕາມວັນທີ ທີ່ໄດ້ລະບຸໄວ້ຂ້າງເທິງນີ້ ເປັນຕົ້ນໄປ.

**ຜູ້ຈັດຊື້** **ຜູ້ສະໜອງສິນຄ້າ**

ລາຍເຊັນ

ຊື່ ແລະນາມສະກຸນ

ຕຳແໜ່ງ **ພະຍານ:**